ສູນກາງພັກ
ເລກທີ 58/
ວັນທີ 30/01/23

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະຈັດຕັ້ງສູນກາງພັກ

ເລກທີ 25 /ຄຈສພ
ນະຄອນຫຼວງວຽງຈັນ, ວັນທີ 24/01/2023

# ຄໍາແນະນໍາ

## ການຈັດຕັ້ງປະຕິບັດ ຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການດໍາເນີນກອງປະຊຸມຄືບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ

- ອີງຕາມ ຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ເລກທີ 268/ຄລສພ, ລົງວັນທີ 20 ມັງກອນ 2023 ວ່າດ້ວຍການດໍາເນີນກອງປະຊຸມຄືບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ.
- ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ ເລກທີ 18/ກມສພ, ລົງວັນທີ 02 ກັນຍາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຈັດຕັ້ງສູນກາງພັກ.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດເນື້ອໃນຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການດໍາເນີນກອງປະຊຸມຄືບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ ໃຫ້ຖືກຕ້ອງ, ເປັນເອກະພາບ ແລະ ທັນເວລາ ໃນທົ່ວພັກ, ຄະນະຈັດຕັ້ງສູນກາງພັກ ຈຶ່ງໄດ້ອອກຄໍາແນະນໍາຈັດຕັ້ງປະຕິບັດ ດັ່ງນີ້:

**I. ການເຊື່ອມຊຶມເອກະສານ ແລະ ເປົ້າໝາຍເຂົ້າຮ່ວມກອງປະຊຸມຄືບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ.**

**1. ການເຊື່ອມຊຶມເອກະສານ.**

ເຜີຍແຜ່ເຊື່ອມຊຶມກໍາແໜ້ນ ຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 268/ຄລສພ, ລົງວັນທີ 20 ມັງກອນ 2023; ຄໍາແນະນໍາຂອງຄະນະຈັດຕັ້ງສູນກາງພັກ ສະບັບນີ້; ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 030/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍມາດຕະຖານພະນັກງານ ນໍາພາ-ຄຸ້ມຄອງ; ມາດຕະຖານຂອງສະມາຊິກພັກ, ຂໍ້ຫ້າມສໍາລັບສະມາຊິກພັກ, ສິດ ແລະ ໜ້າທີ່ຂອງຄະນະພັກແຕ່ລະຂັ້ນ ທີ່ໄດ້ກໍານົດໄວ້ໃນກົດລະບຽບພັກ.

**2. ເປົ້າໝາຍເຂົ້າຮ່ວມກອງປະຊຸມຄືບຄະນະກາງສະໄໝຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ.**

ກ. ຄະນະບໍລິຫານງານສູນກາງພັກ.

➢ ກອງປະຊຸມຫາບທາມຄວາມໄວ້ວາງໃຈ ຕໍ່ການນໍາພາລວມ ແລະ ບຸກຄົນຄະນະບໍລິຫານງານສູນກາງພັກ ປະກອບດ້ວຍ:

+ ບັນດາສະຫາຍກໍາມະການສົມບູນ ແລະ ສໍາຮອງສູນກາງພັກ;
+ ຄະນະບໍລິຫານງານພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ;
+ ປະທານ, ຮອງປະທານກໍາມາທິການ ແລະ ຄະນະເລຂາທິການ ຂອງສະພາແຫ່ງຊາດ;
+ ຄະນະປະຈໍາພັກເມືອງ-ນະຄອນ;
+ ສໍາລັບອົງຄະນະພັກກະຊວງ ປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ແມ່ນບັນດາສະຫາຍກໍາມະການຄະນະບໍລິຫານງານພັກກົມໃຫຍ່ ແລະ ທຽບເທົ່າ ຂຶ້ນໄປ.



CamScanner

➢ ກອງປະຊຸມເປີດກວ້າງ ປະກອບດ້ວຍ:

+ ບັນດາສະຫາຍກຳມະການສົມບູນ ແລະ ສຳຮອງສູນກາງພັກ;

+ ເລຂາຄະນະບໍລິຫານງານພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ ແລະ ບັນດາສະຫາຍຄະນະປະຈຳສະພາແຫ່ງຊາດ ທີ່ບໍ່ແມ່ນກຳມະການສົມບູນ, ສຳຮອງສູນກາງພັກ.

➢ ກອງປະຊຸມພາຍໃນ ປະກອບດ້ວຍ: ບັນດາສະຫາຍກຳມະການສົມບູນ ແລະ ສຳຮອງສູນກາງພັກ.

ຂ. ຄະນະບໍລິຫານງານພັກກະຊວງ-ອົງການ.

➢ ກອງປະຊຸມທາບທາມຄວາມໄວ້ວາງໃຈ ຕໍ່ການນຳພາລວມ ແລະ ບຸກຄົນຄະນະບໍລິຫານງານພັກ ປະກອບດ້ວຍ:

+ ບັນດາສະຫາຍກຳມະການຄະນະບໍລິຫານງານພັກກະຊວງ-ອົງການ;

+ ຄະນະພັກຮາກຖານ ແລະ ຄະນະໜ່ວຍພັກຮາກຖານ ທີ່ຂຶ້ນກັບອົງຄະນະພັກກະຊວງ-ອົງການ;

+ ເລຂາ ແລະ ປະທານອົງການຈັດຕັ້ງມະຫາຊົນ ກະຊວງ-ອົງການ;

+ ບັນດາສະຫາຍສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າກົມ ແລະ ທຽບເທົ່າ ຂຶ້ນໄປ;

+ ສຳລັບອົງຄະນະພັກກະຊວງປ້ອງກັນປະເທດ ແລະ ຂອງກະຊວງປ້ອງກັນຄວາມສະຫງົບ ປະກອບດ້ວຍ ຄະນະບໍລິຫານງານພັກກະຊວງ, ຄະນະບໍລິຫານງານພັກບັນດາກົມໃຫຍ່ ແລະ ທຽບເທົ່າ ຂຶ້ນໄປ.

➢ ກອງປະຊຸມເປີດກວ້າງ ປະກອບດ້ວຍ:

+ ຄະນະບໍລິຫານງານພັກກະຊວງ-ອົງການ;

+ ເລຂາຄະນະພັກຮາກຖານ ແລະ ເລຂາໜ່ວຍພັກຮາກຖານ ທີ່ຂຶ້ນກັບອົງຄະນະພັກກະຊວງ-ອົງການ;

+ ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າກົມ ແລະ ທຽບເທົ່າ ຂຶ້ນໄປ;

+ ເລຂາ ແລະ ປະທານອົງການຈັດຕັ້ງມະຫາຊົນ ຂອງກະຊວງ-ອົງການ ທີ່ບໍ່ແມ່ນຄະນະພັກ;

+ ສຳລັບອົງຄະນະພັກກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ປະກອບດ້ວຍ ຄະນະບໍລິຫານງານພັກກະຊວງ, ຄະນະບໍລິຫານງານພັກບັນດາກົມໃຫຍ່ ແລະ ທຽບເທົ່າ ຂຶ້ນໄປ.

➢ ກອງປະຊຸມພາຍໃນ ປະກອບດ້ວຍ: ຄະນະບໍລິຫານງານພັກກະຊວງ-ອົງການ.

ຄ. ຄະນະບໍລິຫານງານພັກແຂວງ-ນະຄອນຫຼວງວຽງຈັນ.

➢ ກອງປະຊຸມທາບທາມຄວາມໄວ້ວາງໃຈ ຕໍ່ການນຳພາລວມ ແລະ ບຸກຄົນຄະນະບໍລິຫານງານພັກ ປະກອບດ້ວຍ:

+ ຄະນະບໍລິຫານງານພັກແຂວງ-ນະຄອນຫຼວງວຽງຈັນ;

+ ຄະນະປະຈຳສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ ທີ່ບໍ່ແມ່ນກຳມະການພັກແຂວງ-ນະຄອນຫຼວງວຽງຈັນ;

+ ຄະນະພັກຮາກຖານ ແລະ ໜ່ວຍພັກຮາກຖານ ທີ່ຂຶ້ນກັບອົງຄະນະພັກແຂວງ-ນະຄອນຫຼວງວຽງຈັນ;

+ ສະມາຊິກພັກສົມບູນ ທີ່ມີຕຳແໜ່ງບໍລິຫານຂັ້ນຮອງຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ;

+ ຫົວໜ້າ, ຮອງຫົວໜ້າກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ-ນະຄອນຫຼວງວຽງຈັນ;

+ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ ທີ່ປະຈຳຢູ່ແຂວງ-ນະຄອນຫຼວງວຽງຈັນ;

+ ຄະນະບໍລິຫານງານພັກເມືອງ-ນະຄອນ;

+ ເລຂາ ແລະ ປະທານ ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ຂອງແຂວງ-ນະຄອນຫຼວງວຽງຈັນ ທີ່ບໍ່ແມ່ນກຳມະການພັກແຂວງ-ນະຄອນຫຼວງວຽງຈັນ.



CamScanner

➢ ກອງປະຊຸມເປີດກວ້າງ ປະກອບດ້ວຍ:

+ ຄະນະບໍລິຫານງານພັກແຂວງ-ນະຄອນຫຼວງວຽງຈັນ;

+ ຄະນະປະຈໍາສະພາປະຊາຊົນແຂວງ-ນະຄອນຫຼວງວຽງຈັນ ທີ່ບໍ່ແມ່ນກໍາມະການພັກແຂວງ-ນະຄອນຫຼວງວຽງຈັນ;

+ ເລຂາພັກເມືອງ-ນະຄອນ ທີ່ບໍ່ແມ່ນກໍາມະການພັກແຂວງ-ນະຄອນຫຼວງວຽງຈັນ;

+ ຫົວໜ້າກອງບັນຊາການທະຫານ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ຂອງແຂວງ-ນະຄອນຫຼວງ ທີ່ບໍ່ແມ່ນກໍາມະການພັກແຂວງ-ນະຄອນຫຼວງວຽງຈັນ;

+ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຂັ້ນຮອງຫົວໜ້າພະແນກ ແລະ ທຽບເທົ່າ ຂຶ້ນໄປ;

+ ຄະນະປະຈໍາພັກເມືອງ-ນະຄອນ;

+ ເລຂາ ແລະ ປະທານ ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ຂອງແຂວງ-ນະຄອນຫຼວງວຽງຈັນ ທີ່ບໍ່ແມ່ນກໍາມະການພັກແຂວງ-ນະຄອນຫຼວງວຽງຈັນ.

➢ ກອງປະຊຸມພາຍໃນ ປະກອບດ້ວຍ: ຄະນະບໍລິຫານງານພັກແຂວງ-ນະຄອນຫຼວງວຽງຈັນ.

ງ. ອົງຄະນະພັກເມືອງ-ນະຄອນ.

➢ ກອງປະຊຸມທາບທາມຄວາມໄວ້ວາງໃຈ ຕໍ່ການນໍາພາລວມ ແລະ ບຸກຄົນຄະນະບໍລິຫານງານພັກ ປະກອບດ້ວຍ:

+ ຄະນະບໍລິຫານງານພັກເມືອງ-ນະຄອນ;

+ ຄະນະພັກຮາກຖານ, ໜ່ວຍພັກຮາກຖານ ອ້ອມຂ້າງເມືອງ-ນະຄອນ;

+ ສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈໍາຢູ່ເມືອງ-ນະຄອນ;

+ ເລຂາ ແລະ ປະທານ ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ຂອງເມືອງ-ນະຄອນ ທີ່ບໍ່ແມ່ນຄະນະບໍລິຫານງານພັກເມືອງ-ນະຄອນ;

+ ເລຂາຮາກຖານພັກບ້ານ;

+ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າຫ້ອງການ ແລະ ທຽບເທົ່າ ຂຶ້ນໄປ.

➢ ກອງປະຊຸມເປີດກວ້າງ ປະກອບດ້ວຍ:

+ ຄະນະບໍລິຫານງານພັກເມືອງ-ນະຄອນ;

+ ເລຂາຮາກຖານພັກ ອ້ອມຂ້າງເມືອງ-ນະຄອນ;

+ ເລຂາຮາກຖານພັກບ້ານ;

+ ສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈໍາຢູ່ເມືອງ-ນະຄອນ;

+ ສະມາຊິກພັກສົມບູນ ທີ່ມີຕໍາແໜ່ງບໍລິຫານຮອງຫົວໜ້າຫ້ອງການ ແລະ ທຽບເທົ່າ ຂຶ້ນໄປ.

➢ ກອງປະຊຸມພາຍໃນ ປະກອບດ້ວຍ: ຄະນະບໍລິຫານງານພັກເມືອງ-ນະຄອນ.

3. ການສໍາຫຼວດບຸກຄົນໃນຄະນະພັກ ໃຫ້ປະຕິບັດດັ່ງນີ້:

3.1. ກ່ອນອື່ນແມ່ນຈັດຕັ້ງດໍາເນີນຊີວິດການເມືອງ ພາຍໃນຄະນະປະຈໍາພັກ (ສໍາລັບບ່ອນທີ່ມີຄະນະປະຈໍາພັກ), ຊຶ່ງເປົ້າໝາຍເຂົ້າຮ່ວມ ປະກອບດ້ວຍ:

- ຄະນະປະຈໍາພັກ ທັງໝົດ.
- ຕາງໜ້າຄະນະພັກຂັ້ນເທິງ.
- ກໍາມະການຄະນະບໍລິຫານງານພັກ ທັງໝົດ.



CamScanner

3.2. ພາຍຫຼັງສໍາເລັດການສໍາຫຼວດ ຕໍ່ບັນດາສະຫາຍໃນຄະນະປະຈໍາພັກ, ໃຫ້ຄະນະຮັບຜິດຊອບແບ່ງໜ່ວຍສໍາຫຼວດ ສໍາລັບບັນດາສະຫາຍກໍາມະການຄະນະພັກ (ບ່ອນທີ່ມີກໍາມະການຄະນະພັກ ຈໍານວນຫຼາຍ) ແລະ ມອບໃຫ້ບັນດາສະຫາຍຄະນະປະຈໍາພັກ ແລະ ພາກສ່ວນກ່ຽວຂ້ອງ ຕິດຕາມຢູ່ແຕ່ລະໜ່ວຍສໍາຫຼວດ.

II. ກໍານົດເວລາ.

1. ຄະນະບໍລິຫານງານສູນກາງພັກ ໃຊ້ເວລາໃນການດໍາເນີນກອງປະຊຸມດັ່ງນີ້:

- ການທາບທາມຄວາມໄວ້ວາງໃຈ ຕໍ່ບຸກຄົນຄະນະບໍລິຫານງານສູນກາງພັກ ຢູ່ອົງຄະນະພັກ ກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ ພາກສ່ວນລະ 01 ວັນ ແຕ່ຕ້ອງໃຫ້ສໍາເລັດກ່ອນການດໍາເນີນກອງປະຊຸມເປີດກວ້າງ 01 ອາທິດ (07 ວັນ);

- ດໍາເນີນກອງປະຊຸມເປີດກວ້າງ ແລະ ກອງປະຊຸມພາຍໃນ ແມ່ນ 04 ວັນ, ໃນນີ້ ກອງປະຊຸມເປີດກວ້າງໃຊ້ເວລາ 02 ວັນ ແລະ ກອງປະຊຸມພາຍໃນ ໃຊ້ເວລາ 02 ວັນ.

2. ອົງຄະນະພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ ໃຊ້ເວລາໃນການດໍາເນີນກອງປະຊຸມດັ່ງນີ້:

- ການທາບທາມຄວາມໄວ້ວາງໃຈ ຕໍ່ບຸກຄົນຄະນະບໍລິຫານງານພັກ ກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ ໃຊ້ເວລາ 01 ວັນ, ແຕ່ຕ້ອງໃຫ້ສໍາເລັດກ່ອນການດໍາເນີນກອງປະຊຸມເປີດກວ້າງ ກະຊວງ-ອົງການ ແມ່ນ 01-02 ວັນ ແລະ ແຂວງ-ນະຄອນຫຼວງວຽງຈັນ ແມ່ນ 02-03 ວັນ;

- ດໍາເນີນກອງປະຊຸມເປີດກວ້າງ ແລະ ພາຍໃນ ແມ່ນ 03-04 ວັນ, ໃນນີ້ ກອງປະຊຸມເປີດກວ້າງ ໃຊ້ເວລາ 01-02 ວັນ ແລະ ກອງປະຊຸມພາຍໃນ ໃຊ້ເວລາ 02 ວັນ.

3. ອົງຄະນະພັກເມືອງ-ນະຄອນ ແລະ ທຽບເທົ່າ ໃຊ້ເວລາໃນການດໍາເນີນກອງປະຊຸມ ດັ່ງນີ້:

- ການທາບທາມຄວາມໄວ້ວາງໃຈ ຕໍ່ບຸກຄົນຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າ ໃຊ້ເວລາ 01 ວັນ, ແຕ່ຕ້ອງໃຫ້ສໍາເລັດກ່ອນການດໍາເນີນກອງປະຊຸມເປີດກວ້າງ 01-02 ວັນ;

- ດໍາເນີນກອງປະຊຸມເປີດກວ້າງ ແລະ ພາຍໃນ ແມ່ນ 02-03 ວັນ, ໃນນີ້ ກອງປະຊຸມເປີດກວ້າງ ໃຊ້ເວລາ 01-02 ວັນ, ກອງປະຊຸມພາຍໃນ ໃຊ້ເວລາ 02 ວັນ.

(ສໍາລັບຮ່າງບັດທາບທາມຄວາມໄວ້ວາງໃຈຕໍ່ບຸກຄົນໃນຄະນະບໍລິຫານງານພັກ ແຕ່ລະຂັ້ນໄດ້ຄັດຕິດມາພ້ອມນີ້).

III. ວິທີຈັດຕັ້ງປະຕິບັດ.

1. ຄະນະບໍລິຫານງານພັກ, ຄະນະປະຈໍາພັກ ແຕ່ລະຂັ້ນ ເຊື່ອມຊຶມ, ກໍາແໜ້ນເນື້ອໃນຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 268/ຄລສພ, ລົງວັນທີ 20 ມັງກອນ 2023 ແລະ ຄໍາແນະນໍາສະບັບນີ້ ໃຫ້ເລິກເຊິ່ງ ແລະ ຜັນຂະຫຍາຍເປັນອັນລະອຽດ, ເປັນເຈົ້າການເຜີຍແຜ່ໃຫ້ອົງການເສນາທິການ ແລະ ຄະນະພັກຂັ້ນລຸ່ມ ທີ່ຂຶ້ນກັບຕົນ ເພື່ອຈັດຕັ້ງປະຕິບັດໃຫ້ຖືກຕ້ອງ;

2. ຄະນະບໍລິຫານງານພັກ, ຄະນະປະຈໍາພັກ ແຕ່ລະຂັ້ນ ຄົ້ນຄວ້າແຕ່ງຕັ້ງຄະນະຮັບຜິດຊອບ, ອະນຸກໍາມະການຕ່າງໆໃນການກະກຽມ ແລະ ດໍາເນີນກອງປະຊຸມ, ພ້ອມທັງສ້າງແຜນການເຄື່ອນໄຫວລະອຽດຂອງແຕ່ລະອະນຸກໍາມະການ;

3. ການດໍາເນີນກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ ຕ້ອງໄດ້ລາຍງານຂໍຄໍາເຫັນຈາກຄະນະພັກ ຂັ້ນເທິງຖັດຕົນ; ສໍາລັບອົງຄະນະພັກກະຊວງ-ອົງການ ແລະ ອົງຄະນະພັກແຂວງ-ນະຄອນຫຼວງວຽງຈັນ ຕ້ອງໄດ້ລາຍງານຂໍຄໍາເຫັນຄະນະເລຂາທິການສູນກາງພັກ (ໂດຍຜ່ານຄະນະຈັດຕັ້ງສູນກາງພັກ) ກ່ອນ 07 ວັນ;



CamScanner

4. ຜົນການທາບທາມຄວາມໄວ້ວາງໃຈ ຂອງສະມາຊິກພັກ ຕໍ່ການນຳພາລວມ ແລະ ຕໍ່ບຸກຄົນໃນຄະນະພັກ ແມ່ນໃຫ້ລາຍງານຄະນະພັກຂັ້ນເທິງ ທີ່ມີສິດຄຸ້ມຄອງເປົ້າໝາຍດັ່ງກ່າວ ເພື່ອຮັບຊາບ ແລະ ໃຫ້ທິດຊີ້ນຳທັນເວລາ;

5. ຄະນະບໍລິຫານງານພັກ ແຕ່ລະຂັ້ນ ປະສານສົມທົບກັບອົງການເສນາທິການທີ່ກ່ຽວຂ້ອງ ເພື່ອຮັບປະກັນ ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ມີປະສິດທິຜົນ;

6. ຜ່ານການຈັດຕັ້ງປະຕິບັດຕົວຈິງ ຖ້າພົບຄວາມຫຍຸ້ງຍາກ ຫຼື ມີບັນຫາໃດບໍ່ທັນຈະແຈ້ງ ໃຫ້ຂໍຄຳເຫັນ ຫຼື ລາຍງານຕໍ່ຄະນະພັກ ຂັ້ນເທິງຖັດຕົນ ເພື່ອພິຈາລະນາ ແລະ ໃຫ້ທິດຊີ້ນຳທັນເວລາ.

**ຫົວໜ້າຄະນະຈັດຕັ້ງສູນກາງພັກ**

**ນ.ສີໃສ ລືເດດມູນສອນ**